**DAK LAK RUBBER COMPANY.,LTD (DAKLAORUCO)**
**Address: Thaluong Village - Pakse District - Champasak Province - Lao PDR**
**Tel: 00856 31 21 25 70; Fax: 00856 31 25 29 82**
**Email: daklaoruco.lao@gmail.com Website: http://www.daklaoruco.com**

ເລກທີ: 06/ລງ- FSC *ປາກເຊ, ວັນທີ 20 ເດືອນ 01 ປີ 2025*

**ບົດລາຍງານ**

**ວ່າດ້ວຍການຈັດຕັ້ງປະຕິບັດກົດລະບຽບການສະກັດກັ້ນ, ຕ້ານການລ່ວງລະເມີດທາງເພດ ປີ 2024**

- ອີງຕາມກົດໝາຍວ່າດ້ວຍ ແຮງງານ ສະບັບເລກທີ 43/ສພຊ (ສະບັບປັບປຸງ) ລົງວັນທີ 24/12/2013 ໂດຍສະພາແຫ່ງຊາດ ຂອງ ສປປ ລາວ;
- ອີງຕາມມາດຕະຖານແຫ່ງຊາດສະບັບ ຊົ່ວຄາວສຳລັບການປະເມີນປ່າໄມ້ ຂອງ ສປປ ລາວ (FSC-STD-LAO-01-2020);
- ອີງຕາມກົດລະບຽບເລກທີ 05/ ລບ- ບສ ລົງວັນທີ 27/6/2023 ຂອງຜູ້ອຳນວຍການບໍລິສັດ ວ່າດ້ວຍການສະກັດກັ້ນ, ຕ້ານການລ່ວງລະເມີດທາງເພດ;
- ອີງຕາມກົດລະບຽບເລກທີ 06/ ລບ- ບສ ລົງວັນທີ 27/6/2023 ຂອງຜູ້ອຳນວຍການບໍລິສັດ ວ່າດ້ວຍກົນໄກຮັບ ແລະ ແກ້ໄຂໜັງສືຮ້ອງຮຽນ, ປະກອບຄຳເຫັນຂອງພາກສ່ວນທີ່ກ່ຽວຂ້ອງ;
- ອີງຕາມບົດບາດແລະໜ້າທີ່ ຂອງຄະນະ FSC ຂອງບໍລິສັດ;
- ອີງຕາມສະພາບຕົວຈິງຢູ່ທີ່ ບໍລິສັດ.

ຄະນະ FSC ຂອງບໍລິສັດລາຍງານກ່ຽວກັບການຈັດຕັ້ງປະຕິບັດກົດລະບຽບ ວ່າດ້ວຍການສະກັດກັ້ນ, ຕ້ານການລ່ວງລະເມີດທາງເພດ ປີ 2024 ດັ່ງຕໍ່ໄປນີ້:

ເພື່ອຮັບປະກັນສິດ, ພັນທະ ແລະ ຜົນປະໂຫຍດອັນຊອບທຳຂອງຜູ້ອອກແຮງງານ, ຮັບປະກັນການເຄື່ອນໄຫວບໍລິຫານຂອງບໍລິສັດປະຕິບັດຕາມກົດໝາຍ ແລະ ສົນທິສັນຍາສາກົນ, ກໍຄືປະຕິບັດຕາມມາດຕະຖານແຫ່ງຊາດສະບັບຊົ່ວຄາວສຳລັບການປະເມີນປ່າໄມ້ຢູ່ ສປປ ລາວ (FSC-STD-LAO-01 - 2020 EN). ບໍລິສັດໄດ້ອອກກົດ
ລະບຽບເລກທີ 05/ ລບ- ບສ ລົງວັນທີ 27/6/2023 ຂອງຜູ້ອຳນວຍການບໍລິສັດ ວ່າດ້ວຍການສະກັດກັ້ນ, ຕ້ານການລ່ວງລະເມີດທາງເພດ.

**1. ຜົນການຈັດຕັ້ງປະຕິບັດກົດລະບຽບ:**

**1.1 ຈັດຕັ້ງປະຕິບັດການເຜີຍແຜ່, ໂຄສະນາໃຫ້ພະນັກງານກຳມະກອນ, ຜູ້ອອກແຮງງານທຸກຄົນຮັບຮູ້ກ່ຽວກັບ:**

***1.1.1. ເນື້ອໃນກ່ຽວກັບການສະກັດກັ້ນ, ຕ້ານການລ່ວງລະເມີດທາງເພດ***

- ນິຍາມ: "ການລ່ວງລະເມີດທາງເພດ" ແມ່ນການປະພຶດທາງເພດທີ່ສົ່ງຜົນສະທ້ອນເຖິງກຽດສັກສີຂອງເພດຍິງ ແລະ ເພດຊາຍ, ນີ້ແມ່ນພຶດຕິກຳທີ່ບໍ່ໄດ້ຮັບການຍອມຮັບ, ບໍ່ຕ້ອງການ ແລະ ບໍ່ເໝາະສົມທີ່ລະເມີດກຽດສັກສີຂອງຜູ້ຖືກເຄາະຮ້າຍ ແລະ ສ້າງສະພາບແວດລ້ອມການເຮັດວຽກໃນຫ້ອງການບໍ່ມີຄວາມສະຫງົບ ທຸນທວຍ, ຢ້ານ, ແລະ ເປັນປໍລະປັກ.

- ບັນດາຮູບແບບການລ່ວງລະເມີດທາງເພດ:

+ ເຈດຕະຕາສຳຜັດຄົນອື່ນໂດຍທີ່ເຂົາເຈົ້າບໍ່ຕ້ອງການ, ລູບຄຳ, ຢິກຢອກ, ໂອບກອດ ຫລື ຈູບ ຈົນເຖິງການລ່ວງລະເມີດທາງເພດ, ຂົ່ມຂືນສຳເລົາ;

+ ດ້ວຍວາຈາ, ຄວາມຄິດເຫັນທີ່ບໍ່ເຫມາະສົມທາງດ້ານສັງຄົມ, ວັດທະນາທຳ ແລະ ສິ່ງທີ່ບໍ່ຕ້ອງການ, ສະແດງໃຫ້ເຫັນເຖິງຄວາມຫມາຍທີ່ແຝງໄວ້ ກ່ຽວກັບການລ່ວງລະເມີດທາງເພດ, ລວມໄປເຖິງ ຄຳສະເຫນີ, ການຮ້ອງຂໍທີ່ບໍ່ຕ້ອງການ ຫລື ຄຳເຊື້ອເຊີນໄປຫລິ້ນຂອງບຸກຄົນ ຢ່າງຕໍ່ເນື່ອງ.

+ ໃຊ້ພາສາກາຍທີ່ກະຕຸ້ນໃຈ, ການສະແດງອອກທີ່ບໍ່ສຸພາບ, ເບິ່ງດ້ວຍສາຍຕາຢົວະຢວນອາລົມທາງເພດ, ກະພິບຕາຢ່າງຕໍ່ເນື່ອງ, ຮູບການນີ້ຍັງປະກອບມີການອັດບັນດາເອກະສານ, ຮູບພາບລາມົກ, ບັນດາວັດຖຸສິ່ງຂອງ, ຫນ້າຈໍຄອມພິວເຕີ, ບັນດາແອັບຕ່າງໆ, ຈົດຫມາຍເອເລັກໂຕນິກ, ຈົດບັນທຶກ, ຂໍ້ຄວາມກ່ຽວກັບທາງເພດ.

- ສະຖານທີ່ເຮັດວຽກ ແມ່ນບັນດາສະຖານທີ່ປະຕິບັດວຽກງານທັງໝົດ ຄື: ຢູ່ທີ່ຫ້ອງການ, ໂຮງງານ, ງານລ້ຽງ, ໃນກອງປະຊຸມສຳມະນາ, ຝຶກອົບຮົມ, ໄປເຮັດວຽກນອກເຂດໂຄງການ, ການສົນທະນາທາງ ໂທລະສັບ ແລະ ອຸປະກອນອີເລັກໂທຣນິກ.

***1.1.2 ບັນດາມາດຕະການສະກັດກັ້ນ, ຕ້ານການລ່ວງລະເມີດທາງເພດ***

- ຫ້າມເດັດຂາດບັນດາພຶດຕິກຳລ່ວງລະເມີດທາງເພດ. ຮັບປະກັນສະພາບແວດລ້ອມການເຮັດວຽກ ແລະ ສຸຂະພາບທີ່ປອດໄພ ໃຫ້ພະນັກງານກຳມະກອນ ແລະ ຄົນພາຍນອກທີ່ເຂົ້າມາເຮັດວຽກຢູ່ບໍລິສັດ.

- ບໍ່ວ່າຈະເປັນບຸກຄົນພາຍໃນບໍລິສັດ ຫຼື ບຸກຄົນພາຍນອກທີ່ເຂົ້າມາເຮັດວຽກກັບບໍລິສັດທີ່ເຊື່ອວ່າຕົນເອງຕົກເປັນເຫຍື່ອຂອງການລ່ວງລະເມີດທາງເພດ ມີສິດ ແລະ ຄວາມຮັບຜິດຊອບໃນການລາຍງານສະຖານະການໃຫ້ຫົວໜ້າຫ້ອງການບໍລິສັດ ຫຼື ຄະນະນຳບໍລິສັດທັນທີ.

- ໜ່ວຍງານທີ່ຂຶ້ນກັບບໍລິສັດມີໜ້າທີ່ ເຜີຍແຜ່, ສະກັດກັ້ນ ແລະ ສະໜອງຂໍ້ມູນການລ່ວງລະເມີດທາງເພດໃນໜ່ວຍງານໃຫ້ຫົວໜ້າຫ້ອງການບໍລິສັດ ແລະ ຄະນະນຳບໍລິສັດໂດຍໄວ.

- ຮັບປະກັນການຮ້ອງຮຽນ ແລະ ຂໍ້ກ່າວຫາກ່ຽວກັບການລ່ວງລະເມີດທາງເພດຖືກ ສືບສວນ - ສອບສວນ ແລະ ແກ້ໄຂຢ່າງຊື່ສັດ ແລະ ຍຸດຕິທຳ. ການເປີດເຜີຍຫຼືບໍ່ເປີດເຜີຍການລ່ວງລະເມີດທາງເພດ ຕ້ອງໄດ້ຮັບຄວາມຍິນຍອມຈາກຜູ້ຖືກຂົ່ມເຫັງທາງເພດ.

***1.1.3 ມາດຕະການແກ້ໄຂການລະເມີດການລະເມີດທາງເພດ***

- ທັງສອງຝ່າຍພ້ອມກັນໄກ່ເກ່ຍ, ເຈລະຈາ ໂດຍບໍ່ມີການເຂົ້າຮ່ວມຂອງບໍລິສັດ.

- ໃນກໍລະນີບໍ່ສາມາດຕົກລົງກັນໄດ້, ຜູ້ຖືກຂົ່ມເຫັງທາງເພດຕ້ອງສົ່ງໜັງສືຮ້ອງຮຽນຕໍ່ຫົວໜ້າຫ້ອງການບໍລິສັດ ຫຼື ຄະນະນຳບໍລິສັດ.

+ ຫົວໜ້າຫ້ອງການຮັບເອົາຄຳຮ້ອງຮຽນ, ຈັດຕັ້ງການສືບສວນ-ສອບສວນ, ໄກ່ເກ່ຍລະຫວ່າງສອງຝ່າຍ. ຖ້າການໄກ່ເກ່ຍບໍ່ສຳເລັດ, ຫົວຫນ້າຫ້ອງການເຮັດບົດລາຍງານຕໍ່ຄະນະນຳຂອງບໍລິສັດເພື່ອຕັດສິນວ່າຈະຮັບເອົາຄຳຮ້ອງຮຽນຫຼືຈະດຳເນີນວິໄນຕໍ່ຜູ້ລະເມີດ.

+ ຮູບແບບການໃສ່ວິໄນເຊັ່ນ: ຕັກເຕືອນ, ບັງຄັບໃຫ້ຂໍໂທດຜູ້ເຄາະຮ້າຍ, ຕຳນິຕິຕຽນ, ຍົກຍ້າຍ, ປົດຕຳແໜ່ງ, ຫຼຸດຂັ້ນເງິນເດືອນ, ບັງຄັບໃຫ້ອອກຈາກວຽກ.

- ໃນກໍລະນີ ລູກຄ້າ ຫຼື ຜູ້ຮັບເໝົາ ຖືກຮ້ອງຮຽນ, ກ່າວຫາ, ບໍລິສັດຈະແຈ້ງໃຫ້ຮັບຮູ້ ຖ້າຂໍ້ກ່າວຫາດັ່ງກ່າວເປັນຄວາມຈິງ, ບໍລິສັດຈະຍຸດຕິສັນຍາ, ໂຈະການບໍລິການ ຫຼື ຍຸດການຮ່ວມມື.

- ຜູ້ລ່ວງລະເມີດ ຫຼື ຜູ້ຖືກລ່ວງລະເມີດທາງເພດ, ຖ້າບໍ່ເຫັນດີກັບການຕັດສິນຂອງບໍລິສັດ, ມີສິດຮ້ອງຮຽນຕໍ່ອົງການຈັດຕັ້ງຂອງລັດເພື່ອແກ້ໄຂ.

- ການກະທຳໃດໆທີ່ເກີນສິດຂອງບໍລິສັດຈະຖືກແກ້ໄຂໂດຍອົງການທີ່ມີສິດຂອງລັດ.

**1.2. ຜົນໄດ້ຮັບ**

- ແຕ່ວັນທີ 01/2024 ຫາວັນທີ 31/12/2024, ບໍລິສັດຍັງບໍ່ທັນໄດ້ຮັບການຮ້ອງຮຽນ ກ່ຽວກັບການລ່ວງລະເມີດທາງເພດ.

**2. ແຜນການໄຕມາດ I ປີ 2025.**

- ຈັດຕັ້ງໂຄສະນາເຜີຍແຜ່ກົດລະບຽບຂອງພັກ, ກົດໝາຍຂອງລັດກ່ຽວກັບສິດ ແລະ ພັນທະຂອງຜູ້ອອກແຮງງານ.

- ສືບຕໍ່ປະຕິບັດກົດລະບຽບວ່າດ້ວຍການສະກັດກັ້ນ, ຕ້ານການລ່ວງລະເມີດທາງເພດໃນແຕ່ລະປີ.

- ບໍລິສັດ ໃຫ້ຄວາມສຳຄັນກັບການຕິດຕາມກວດກາ ແລະກວດພົບການລະເມີດພາຍໃນດ້ວຍຕົນເອງ. ມີການລົງໂທດສຳລັບກໍລະນີທີ່ລະເມີດ.

ຂ້າງເທິງນີ້ແມ່ນເນື້ອໃນບົດລາຍງານການຈັດຕັ້ງປະຕິບັດກົດລະບຽບວ່າດ້ວຍການສະກັດກັ້ນ, ຕ້ານການລ່ວງລະເມີດທາງເພດ ປີ 2024.

**ຄະນະ FSC ບໍລິສັດ**

ບໍລິສັດ ດັກລັກ ຣັບເບີ ຈຳກັດ
DAKLAK RUBBER CO.,LTD

ດັ້ງ ດິ່ງ ຟຸ່ງ
**Dang Dinh Phung**

*ບ່ອນນຳສົ່ງ:*

- ຄະນະ ອນກ ບສ;
- ບັນດາພາກສ່ວນທີ່ກ່ຽວຂ້ອງ;
- ຄະນະ FSC ບສ
- Website ບສ;
- ສຳເນົາຂາອອກ-ຂາເຂົ້າ.